※ Click to open the article page.

①1 year exchange program ( 2016-17, in Lao)........................................................................................ 2

①1 year exchange program ( 2016-17, in Lao)

## ຊີວິດນັກສຶກສາຢູ່ມະຫາວິທະຍາໄລແຫ່ງຊາດ(ເດືອນ 9 ປີ 2016 ~ ເດືອນ 6 ປີ 2017)

ຂ້ອຍໄດ້ໄປສຶກສາຢູ່ມະຫາວິທະຍາໄລແຫ່ງຊາດທີ່ວຽງຈັນສົກຮຽນ(2016-2017) ຕັ້ງແຕ່ເດືອນ 9 ປີ 2016 ຫາ ເດືອນ 6 ປີ2017.



ໜ້າມະຫາວິທະຍາໄລແຫ່ງຊາດ

ມະຫາວິທະຍາໄລແຫ່ງຊາດມີລະບົບຮຽນສອງພາກຮຽນແຕ່ລະຊັ້ນຮຽນກໍບໍ່ຄືກັນ. ພາກຮຽນທີ 1 ເລີ່ມແຕ່ເດືອນ9 ຫຼື ເດືອນ 10 ຫາກາງເດືອນ 1 ຫຼື ຕົ້ນເດືອນ 2, ພາກຮຽນທີ 2 ເລີ່ມແຕ່ທ້າຍເດືອນ 1 ຫຼືເດືອນ 2 ຫາເດືອນ 6 ຫຼື ເດືອນ 7.

ຂ້ອຍຮຽນຢູ່ຄະນະອັກສອນສາດ ພາກວິຊາພາສາ ແລະວັດທະນະທຳລາວ. ໃນສາຂານີ້ນອກຈາກນັກສຶກສາລາວແລ້ວກໍມີນັກສຶກສາທີ່ມາຈາກຕ່າງປະເທດອີກເຊັ່ນ ຫວຽດນາມ, ກຳປູເຈຍ, ມຽນມາ, ຈີນ ແລະເກົາຫຼີ. ຂ້ອຍຮູ້ສຶກມ່ວນຫຼາຍທີ່ໄດ້ໝູ່ໃໝ່ຈາກຫຼາຍປະເທດ. ຂ້ອຍໄດ້ລົງທະບຽນເລືອກວິຊາຮຽນເຊັ່ນ ວິຊາວັນນະຄະດີລາວ, ປະຫວັດສາດລາວ, ປະຫວັດໂຕໜັງສືລາວ ແລະໂຕໜັງສືທີ່ໃຊ້ໃນເຂດອ້ອມແອ້ມ, ໂຕໜັງສືທຳ(ພາສາລາວບູຮານ).

ໃນເດືອນ 3 ຢູ່ພາກວິຊາພາສາ ແລະວັດທະນະລາວໄດ້ມີການຈັດການແຂ່ງຂັນເວົ້າພາສາລາວ. ຂ້ອຍໄດ້ເປັນໂຕແທນຕາງໜ້າໃຫ້ນັກສຶກສາແລກປ່ຽນຈາກປະເທດຍີ່ປຸ່ນເຂົ້າຮ່ວມການແຂ່ງຂັນຄັ້ງນີ້. ໃນຫົວຂໍ້ຊື່ທີ່ຂ້ອຍຂຶ້ນເວົ້າແມ່ນ"ການຮຽນພາສາຕ່າງປະເທດ" ນັບຕັ້ງແຕ່ມື້ທີ່ຮູ້ວ່າຊິໄດ້ເຂົ້າຮ່ວມການແຂ່ງຂັນ. ຂ້ອຍໄດ້ໃຫ້ອາຈານ ແລະໝູ່ຄົນລາວຊ່ອຍຟັງການເຝິກຊ້ອມການເວົ້າຂອງຂ້ອຍທຸກມື້. ອາຈານ ແລະໝູ່ຊ່ອຍສອນຂ້ອຍໃຫ້ອອກສຽງພາສາລາວຢ່າງຖືກຕ້ອງ. ຫຼັງຈາກຂຶ້ນໄປເວົ້າແລ້ວຈະມີການຖາມ ແລະຕອບຄຳຖາມ ເຊິ່ງຄຳຖາມຈະບໍ່ກ່ຽວຂ້ອງກັບເນື້ອໃນບົດທີ່ເວົ້າມາ ແຕ່ເປັນຄຳຖາມທົດສອບຄວາມຮູ້ທົ່ວໄປກ່ຽວກັບວັດທະນະທຳ ແລະສັງຄົມລາວ. ກຳມະການຈະຕັດສິນໃຫ້ຄະແນນໂດຍການຮ່ວມເອົາຄະແນນທັງໝົດຂອງເນື້ອໃນບົດທີ່ຂຶ້ນເວົ້າ, ການອອກສຽງ ແລະການຕອບຄຳຖາມ. ແຕ່ເປັນໜ້າເສຍດາຍທີ່ຂ້ອຍໄດ້ອັນດັບຕ່ຳກ່ວາທີ 3 ຈາກຈຳນວນສຶກສາທັງໝົດ ແລະໄດ້ຮັບພຽງແຕ່ລາງວັນຊົມເຊີຍເທົ່ານັ້ນ. ຜູ້ທີ່ໄດ້ລາງວັນຊະນະເລີດແມ່ນນັກສຶກສາຄົນຈີນທີ່ຮຽນຢູ່ຫ້ອງດຽວກັນ. ແນ່ນອນວ່າຂ້ອຍຮູ້ສຶກເຫຼືອໃຈໃຫ້ຕົນເອງ ຫຼັງຈາກການແຂ່ງຂັນຂ້ອຍບໍ່ຍອມແພ້ ແລະຕັ້ງໃຈບຸກບືນຮຽນພາສາລາວຫຼາຍຂຶ້ນກວ່າເກົ່າ.



ຖ່າຍຮູບຮ່ວມຫຼັງຈາກການແຂ່ງຂັນເວົ້າພາສາລ

ຫຼັງຈາກເລີກຮຽນຂ້ອຍມັກໄປຫຼິ້ນຢູ່ພາກວິຊາພາສາຍີ່ປຸ່ນ ເພື່ອໂອ້ລົມກັບໝູ່ທີ່ຮຽນພາສາຍີ່ປຸ່ນ ແລະຊ່ວຍເຫຼືອກັນໃນການຮຽນ.ໃນພາກຮຽນທີ 2 ຂ້ອຍໄດ້ໄປຊ່ອຍກວດແກ້ວຽກບ້ານຂອງນັກສຶກສາພາສາຍີ່ປຸ່ນປີ 1

ຂ້ອຍຮູ້ສຶກມ່ວນເວລາໄປເບິ່ງວຽກບ້ານໃຫ້ນັກສຶກສາລາວ ເພາະເຮັດໃຫ້ຂ້ອຍເຫັນສິ່ງທີ່ປົກກະຕິບໍ່ສັງເກດເຫັນ ກໍຄືຄວາມຍາກ ແລະຄວາມມ່ວນຂອງການຮຽນພາສາຍີ່ປຸ່ນ.



ບຸນປີໃໝ່ຢູ່ສະຖາບັນ

ໃນບໍລິເວນຮົ້ວມະຫາວິທະຍາໄລມີສະຖາບັນລາວ-ຍີ່ປຸ່ນ(LJI) ຂ້ອຍກໍມັກໄປຫຼິ້ນ ແລະຮຽນນຳນັກສຶກສາພາສາຍີ່ປຸ່ນ. ບາງທີຂ້ອຍໄດ້ໄປຮ່ວມກິດຈະກຳແລກປ່ຽນກັບນັກສຶກສາຢູ່ພາກວິຊາພາສາຍີ່ປຸ່ນ ຫຼືໄປຮ່ວມບຸນປີໃໝ່ທີ່ສະຖາບັນ(LJI)ຈັດຂຶ້ນ ຂ້ອຍໃສ່ຊຸດກິໂມໂນແລ້ວໄປຊ່ວຍວຽກຢູ່ບູດຂຽນໂຕໜັງສືແບບຍີ່ປຸ່ນ, ນອກຈາກນັ້ນກໍໄດ້ແລກປ່ຽນກັບນັກສຶກສາລາວໃນຫຼາຍຮູບແບບ.

ຂ້ອຍເຊົ່າເຮືອນຢູ່ໃນຕົວເມືອງວຽງຈັນ ແລະທຽວໄປມະຫາວິທະຍາໄລ ໂດຍລົດເມທຸກມື້. ລົດເມນີ້ແມ່ນໄດ້ຮັບການຊ່ວຍເຫຼືອຈາກລັດຖະບານຍີ່ປຸ່ນ ມີແອເຢັນຕິດ ແລະມີຄວາມສະດວກສະບາຍ. ສ່ວນອາຫານການກິນນັ້ນ ຢູ່ມະຫາວິທະຍາໄລມີໂຮງອາຫານ ແລະຢູ່ອ້ອມແອ້ມຂອງມະຫາວິທະຍາໄລກໍມີຮ້ານອາຫານ. ສ່ວນວ່າໃນຕົວເມືອງບ່ອນຂ້ອຍຢູ່ກໍມີອາຫານຂາຍ ບາງເທື່ອຂ້ອຍກໍຊື້ມາກິນ ແລະບາງເທື່ອກໍກິນຢູ່ຮ້ານເລີຍ. ຢູ່ຮ້ານຂາຍເຄື່ອງແຄມທາງມີເຂົ້າສຸກ ແລະເຄື່ອງກິນສຸກຂາຍຫຼາຍຊະນິດລາຄາກໍຖືກ.ນອກຈາກອາຫານຫຼັກແລ້ວ ຂ້ອຍມັກຊື້ໝາກໄມ້ ແລະຂອງຫວານມາກິນ. ຄົນລາວມັກກິນເຜັດເພາະສະນັ້ນອາຫານລາວສ່ວນໃຫຍ່ຈະເຜັດ ແລະໃສ່ໝາກເຜັດຫຼາຍ. ນອກຈາກນັ້ນ ເວລາກິນອາຫານຄົນລາວມັກປຸງອາຫານເພື່ອໃຫ້ຖືກປາກຕົນເອງ ແລະໄດ້ລົດຊາດສະເພາະຂອງຕົນ. ຂ້ອຍມັກກິນເຂົ້າປຽກເສັ້ນມີເສັ້ນໜຽວໆຄ້າຍຄືເສັ້ນອຸດົ້ງຂອງຍີ່ປຸ່ນ. ຂ້ອຍມັກກິນອາຫານລາວປະເພດເສັ້ນ ແລະຢາກເຮັດຄືຄົນລາວ ກໍເລີຍໃສ່ເຄື່ອງປຸງຫຼາຍໆເວລາໄປກິນອາຫານປະເພດເປັນນ້ຳ ເມື່ອກັບມາຍີ່ປຸ່ນບໍ່ໄດ້ປຸງຄືຕອນຢູ່ລາວເລີຍຮູ້ສຶກວ່າຂາດອັນໃດອັນໜຶ່ງ.

ມື້ພັກບາງເທື່ອຂ້ອຍກໍໄປກິນເຂົ້ານຳໝູ່ ແລະບາງເທື່ອໝູ່ກໍພາໄປຫຼິ້ນ. ໝູ່ຄົນລາວໄດ້ສອນຂ້ອຍຫຼາຍຢ່າງເຊັ່ນ ແນະນຳຮ້ານອາຫານແຊບໆ, ສອນພາສາລາວ. ຂ້ອຍມີໂອກາດຮູ້ຈັກກັບຄົນຍີ່ປຸ່ນຫຼາຍຄົນທີ່ເຮັດວຽກຢູ່ລາວ ແລະເຂົາເຈົ້າໄດ້ສອນໃຫ້ຮູ້ຫຼາຍຢ່າງເຮັດໃຫ້ຂ້ອຍຮູ້ວ່າມີວຽກຫຼາຍປະເພດ. ນອກຈາກນັ້ນຂ້ອຍກໍໄດ້ໄປເບິ່ງຮູບເງົາ, ເບິ່ງການແຂ່ງຂັນກິລາເຕະບານລະດັບຊາດເຮັດກິດຈະກຳຕ່າງໆ. ຖ້າບໍ່ໄດ້ໄປໃຊ້ຊີວິດຢູ່ລາວກໍບໍ່ຮູ້ປະສົບການດີໆຫຼາຍສິ່ງຫຼາຍຢ່າງແລະມັນກໍເປັນຄວາມຊົງຈຳທີ່ບໍ່ມີວັນລືມ. ສິ່ງທີ່ຂ້ອຍມັກ ແລະມ່ວນທີ່ສຸດໃນການດຳລົງຊີວິດຢູ່ລາວແມ່ນການເຂົ້າຮ່ວມບຸນທາງສາສະໜາທີ່ມີເກືອບທຸກເດືອນ.


ພະທາດຫລວງຕອນໃຕ້ໄຟກາງຄືນ

ໃນນັ້ນບຸນທີ່ຂ້ອຍປະທັບໃຈທີ່ສຸດແມ່ນບຸນທາດຫຼວງ ແລະບຸນປີໃໝ່ລາວ(ບຸນຫົດນ້ຳ). ບຸນທາດຫຼວງຈັດຂຶ້ນໃນມື້

ເພັງເດືອນ 12 ຂອງປີລາວ, ເປັນບຸນທາງດ້ານສາສະໜາທີ່ໃຫຍ່ທີ່ສຸດຂອງລາວ. ມີຮ້ານວາງສະແດງສິນຄ້າຫຼາຍຊະນິດ ແລະມີຜູ້ຄົນຈຳນວນຫຼວງຫຼາຍເດີນທາງມານະມັດສະການພະທາດຫຼວງໃນຊ່ວງບຸນນີ້. ມີພິທີວຽນທຽນຍ່າງອ້ອມພະທາດຫຼວງສາມຮອບ ແລະຕອນເຊົ້າຂອງມື້ສຸດທ້າຍມີຄົນມາໃສ່ບາດເປັນຈຳນວນຫຼວງຫຼາຍ. ຂ້ອຍໄດ້ໄປຮ່ວມບຸນນີ້ ແລະຮູ້ສຶກເຖິງຄວາມໃຫຍ່ໂຕມະໂຫລານ ແລະປະທັບໃຈຫຼາຍ. ສຳລັບການວຽນທຽນ ແລະໃສ່ບາດໃຫຍ່ຫຼາຍ ເຮັດໃຫ້ຂ້ອຍຮູ້ສຶກໄດ້ເລີຍວ່າບຸນນີ້ເປັນບຸນຍິ່ງໃຫຍ່ ແລະສຳຄັນທີ່ສຸດຂອງປະເທດ.



ພາບການຫຼິ້ນບຸນຫົດນ້ຳໃນປີໃໝ່ລາວ

ບຸນປີໃໝ່ລາວມີໃນຊ່ວງອາກາດຮ້ອນທີ່ສຸດຂອງລາວໃນເດືອນ 4 ແຕ່ລະວັດຈະນຳເອົາພະພຸດທະຮູບລົງຈາກສີມ ເພື່ອໃຫ້ຜູ້ຄົນມາຫົດສົງນ້ຳມົນ ແລະສັກກາລະບູຊາ. ຂ້ອຍໄດ້ໄປເລາະສົງພະກັບໝູ່ຄູ່ຕາມແຕ່ລະວັດ. ນອກຈາກນັ້ນ ໃນຊ່ວງບຸນຫົດນ້ຳນີ້ ທຸກໆຄົນສາມາດສາດນ້ຳໃສ່ກັນຢ່າງບໍ່ຕ້ອງເກງໃຈ. ບໍ່ວ່າຈະເປັນຄຸນ້ຳ ຫຼືສາຍຢາງຫົດນ້ຳ ບໍ່ມີການຍົກເວັ້ນ, ຖ້າອອກໄປນອກເຮືອນໂດຍບໍ່ລະວັງໂຕກໍຈະປຽກໝົດ.ໂຮງຮຽນກໍພັກ ຂ້ອຍເລີຍໄດ້ຫຼິ້ນບຸນຫົດນ້ຳນຳໝູ່ຈົນສົມໃຈ. ນີ້ແມ່ນປະສົບການທີ່ຫາບໍ່ໄດ້ຢູ່ຍີ່ປຸ່ນ, ຂ້ອຍຫຼິ້ນມ່ວນທີ່ສຸດຈົນຄິດວ່າຄືຊິບໍ່ມີໂອກາດຫຼິ້ນມ່ວນແບບນີ້ອີກ.

ນອກຈາກບົດຮຽນຢູ່ໃນໂຮງຮຽນແລ້ວ ຂ້ອຍໄດ້ຮຽນຮູ້ ແລະສັງເກດເຫັນຫຼາຍສິ່ງຫຼາຍຢ່າງໃນການດຳລົງຊີວິດທຸກໆມື້, ສິ່ງເຫຼົ່ານີ້ມີຫຼາຍຢ່າງທີ່ບໍ່ສາມາດຮຽນຮູ້ໄດ້ເວລາຢູ່ຍີ່ປຸ່ນ. ຂ້ອຍຈະນຳປະສົບການເຫຼົ່ານີ້ໄປໃຊ້ໃຫ້ເປັນປະໂຫຍດໃນການດຳລົງຊີວິດໃນອະນາຄົດຢ່າງແນ່ນອນ ແລະຈະຢູ່ໃນຄວາມຊົງຈຳຂອງຂ້ອຍຕະຫຼອດໄປ.

(ເດືອນ 12 ປີ 2017 C.A.&K.N. ຂຽນ)